ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 0134 /ຄປຈ
ນະຄອນຫຼວງວຽງຈັນ, ລົງວັນທີ 04 / 12 / 13

# ມະຕິ
## ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງປະຕິບັດ ມາດຕາ 173 ຂອງກົດໝາຍອາຍາ

ເພື່ອຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດໃຫ້ມີຄວາມຖືກຕ້ອງເປັນທຳແກ່ຄູ່ຄວາມໃນຄະດີ ຕາມເນື້ອໃນມາດຕາ 173 ຂອງກົດໝາຍອາຍາ ກ່ຽວກັບການບໍ່ປະຕິບັດຄຳຕັດສິນ ຫຼື ຄຳສັ່ງຂອງສານ

## ຄະນະປະຈຳສະພາແຫ່ງຊາດ ອອກມະຕິ:

ມາດຕາ 1 ມາດຕາ 173 ຂອງກົດໝາຍອາຍາ ທີ່ໄດ້ກຳນົດວ່າບຸກຄົນຜູ້ໃດຫາກບໍ່ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຫຼື ໝາຍຮຽກຂອງສານ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝແຕ່ 100.000 ກີບ ຫາ 5.000.000 ກີບ ນັ້ນ ແມ່ນມາດຕະການທາງດ້ານກົດໝາຍ ທີ່ດຳເນີນຕໍ່ຜູ້ບໍ່ຍອມປະຕິບັດຄຳຕົກລົງດັ່ງກ່າວຂອງສານ ທັງໆທີ່ຜູ້ກ່ຽວມີເງື່ອນໄຂສາມາດປະຕິບັດໄດ້.

ມາດຕາ 2 ການນຳໃຊ້ມາດຕາ 173 ດັ່ງກ່າວ ຕໍ່ຜູ້ບໍ່ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຫຼື ໝາຍຮຽກຂອງສານນັ້ນ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

- ເຮັດບົດບັນທຶກ ກ່ຽວກັບການບໍ່ຍອມປະຕິບັດ ຄຳຕົກລົງດັ່ງກ່າວໃນຄະດີ ລະຫວ່າງ . . . ( ໂຈດ) ແລະ. . . . (ຈຳເລີຍ);
- ປະກອບສຳນວນຄະດີ ແລ້ວສົ່ງໃຫ້ອົງການໄອຍະການປະຊາຊົນ ບ່ອນກ່ຽວຂ້ອງ ເພື່ອສັ່ງຟ້ອງຂຶ້ນສານຕາມກົດໝາຍ;
- ໃຫ້ສານປະຊາຊົນ ພິຈາລະນາ ຕັດສິນຕາມກົດໝາຍ.

ມາດຕາ 3 ມາດຕະການກັກຕົວ, ກັກຂັງ ຫຼື ຈັບຕົວ ຜູ້ບໍ່ຍອມປະຕິບັດ ຄໍາຕັດສິນ ດັ່ງກ່າວຂອງສານ ຈະນໍາໃຊ້ໄດ້ ກໍຕໍ່ເມື່ອມີຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເທົ່ານັ້ນ.

ມາດຕາ 4 ມອບໃຫ້ ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ກະຊວງຍຸຕິທໍາ ແລະ ກະຊວງປ້ອງກັນຄວາມສະຫງົບ ເຜີຍແຜ່ເນື້ອໃນມະຕິຕົກລົງສະບັບນີ້ ໃຫ້ພະນັກງານ, ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງຕົນ ແລະ ປະຊາຊົນໃນຂອບເຂດທົ່ວປະເທດ ເພື່ອພ້ອມກັນຈັດຕັ້ງປະຕິບັດ ໃຫ້ມີຄວາມຖືກຕ້ອງ ແລະ ມີຄວາມເປັນເອກະພາບກັນ.

ມາດຕາ 5 ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈໍາສະພາແຫ່ງຊາດ
ປະທານ

ປານີ ຢາທໍ່ຕູ້